ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມຫົວໜ້າເຄືອຂ່າຍກວດກາພາຍໃນທະນາຄານກາງອາຊຽນ ຄັ້ງທີ 6
# (The 6th ASEAN Central Bank Heads of Internal Audit Network Meeting)







ໃນຕອນເຊົ້າວັນທີ 13 ທັນວາ 2021 ຜ່ານມານີ້, ຕ່າງໜ້າ ທະນາຄານແຫ່ງ ສປປ ລາວ (ທຫລ) ນາໂດຍ ທ່ານ ມະໂນສິນ ຕັນດາວົງ ຮອງຫົວໜ້າກົມກວດກາພາຍໃນ ທຫລ, ພ້ອມຄະນະໄດ້ສຳເລັດການເຂົ້າຮ່ວມກອງປະຊຸມຫົວໜ້າເຄືອຂ່າຍກວດກາພາຍໃນທະນາຄານກາງອາຊຽນ ຄັ້ງທີ 6 (The 6th ASEAN Central Bank Heads of Internal Audit Network Meeting) ຜ່ານທາງລະບົບອອນໄລ ໂດຍພາຍໃຕ້ການເປັນປະທານຂອງທະນາຄານກາງ ປະເທດ ຟີລິບປິນ ແລະ ມີບັນດາປະເທດສະມາຊິກເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ແມ່ນເພື່ອແລກປ່ຽນບົດຮຽນ ແລະ ປະສົບການກ່ຽວກັບວຽກງານກວດກາພາຍໃນເປັນຕົ້ນແມ່ນ: 1) ການກວດກາພາຍໃນ ໃນຍຸກດິຈິຕອນ Internal Audit in the Age of Digital; 2) ການນຳໃຊ້ປັນຍາປະດິດ ຫຼື ຫຸ່ນຍົນເຂົ້າໃນຂະບວນການກວດກາພາຍໃນແບບອັດຕະໂນມັດ Use of Artificial Intelligence or Robotic Process Automation in Internal Auditing; 3) ການກວດກາພາຍໃນ ຢູ່ເຂດຫ່າງໄກຊອກຫຼີກ Remote Internal Auditing; 4) ການກວດກາຄວາມສ່ຽງດ້ານຄວາມປອດໄພທາງໄຊເບີ Auditing Cyber security Risks. ເຊິ່ງໃນການຈັດກອງປະຊຸມແຕ່ລະປີ ບັນດາປະເທດສະມາຊິກຈະປຶກສາຫາລື ເພື່ອກຳນົດຫົວຂໍ້ທີ່ຈະໃຫ້ປະເທດສະມາຊິກຂຶ້ນນຳສະເໜີ ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ເຊິ່ງຈະມີການປັບປ່ຽນຫົວຂໍ້ໃໝ່ໆ ເພື່ອສົນທະນາແລກປ່ຽນບົດຮຽນແຕ່ລະປີ.

//ຂ່າວ: ກົມກວດກາພາຍໃນ

ຮຽບຮຽງບົດຂ່າວ-ພາບ: ທ ສົມພິດ ທຳມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*